# ກອງທຶນຫຼຸດຜ່ອນຄວາມທຸກຍາກ
# (ປະກາດຮັບສະໝັກພະນັກງານ)

ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ) ຊຶ່ງເປັນໂຄງການພາຍໃຕ້ທຶນຊ່ວຍເຫລືອຈາກທະນາຄານໂລກ ແລະອົງການຮ່ວມມືດ້ານການພັດທະນາຂອງປະເທດສະວິດເຊີແລນ ມີຄວາມຕ້ອງການພະນັກງານ **"ວິສະວະກອນດ້ານກະສິກຳ"** ເພື່ອປະຈຳຢູ່ຫ້ອງການ ທລຍ **ແຂວງຫົວພັນ, ຊຽງຂວາງ, ຫລວງນ້ຳທາ, ສະຫວັນນະເຂດ ແລະ ເຊກອງ. ແຂວງລະ 1 ຕຳແໜ່ງ**, ດັ່ງນີ້:

**<u>ໜ້າທີ່ຮັບຜິດຊອບໂດຍລວມ</u>:**

1. ມີຄວາມເຂົ້າໃຈ ແລະ ລື້ງເຄີຍກັບບັນດາຄູ່ມືແຜນແມ່ບົດພັດທະນາຂອງໂຄງການ ໂດຍສະເພາະ ຄູ່ມືທາງດ້ານວິຊາການ.
2. ກຳນົດແຜນຈັດຕັ້ງປະຕິບັດໂຄງການຍ່ອຍຕາມການມອບໝາຍ ແລະ ຕາມຮອບວຽນຂອງໂຄງການ.
3. ຊີ້ນຳໃນການຈັດຕັ້ງປະຕິບັດໂຄງການຍ່ອຍໃຫ້ຖືກຕ້ອງຕາມແບບ, ຄຸນນະພາບ ແລະ ເວລາທີ່ກຳນົດໄວ້.
4. ຊ່ວຍອອກແບບຄູ່ມືການສອນ ແລະ ຈັດຕັ້ງການຝຶກອົບຮົມໃຫ້ກັບຊຸມຊົນ ໃນກຸ່ມບ້ານ ແລະ ບ້ານເປົ້າໝາຍກ່ຽວກັບການນຳໃຊ້ ແລະ ບຳລຸງຮັກສາໂຄງການຍ່ອຍດ້ານກະສິກຳໃຫ້ມີຄວາມຍືນຍົງ.
5. ຊ່ວຍພະນັກງານ ທລຍ ຂັ້ນເມືອງ ໃນການດຳເນີນການຈັດຕັ້ງປະຕິບັດວຽກງານຝຶກອົບຮົມ ໃນຫົວຂໍ້ທີ່ກ່ຽວ ຂ້ອງ.
6. ສຳຫລວດລາຄາວັດສະດຸກໍ່ສ້າງ ແລະ ອຸປະກອນຮັບໃຊ້ຕ່າງໆ ກ່ຽວກັບໂຄງການຍ່ອຍດ້ານກະສິກຳໃນທ້ອງຖິ່ນຢ່າງເປັນປະຈຳ ແລະ ປັບປຸງເຂົ້າໃນລະບົບຖານຂໍ້ມູນລາຄາຫົວໜ່ວຍ.
7. ກະກຽມບົດລາຍງານຄວາມຄືບໜ້າຂອງວຽກທີ່ຕົນຮັບຜິດຊອບ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ. ເຊັ່ນ: ບົດລາຍງານປະຈຳເດືອນ, ໄຕມາດ ແລະ ປີ ຫລື ຕາມຄວາມຮຽກຮ້ອງຕ້ອງການ.
8. ວິເຄາະຂໍ້ມູນຢູ່ຂັ້ນບ້ານ ແລະ ກຸ່ມບ້ານ ແລະ ປະເມີນກ່ຽວກັບກັບກິດຈະກຳທີ່ປັບປຸງຊີວິດການເປັນຢູ່ຂອງຊຸມຊົນຢູ່ທ້ອງຖິ່ນ ຫລື ເມືອງເປົ້າໝາຍດັ່ງກ່າວ ເພື່ອເປັນພື້ນຖານ ແລະ ຂໍ້ມູນໃນການສ້າງໂຄງການຍ່ອຍດ້ານກະສິກຳໃຫ້ເຂົາເຈົ້າ.
9. ສຳຫລວດ, ອອກແບບສະຖານທີ່ລ້ຽງສັດ ພ້ອມທັງອຸປະກອນສຳລັບການສ້າງຟາມລ້ຽງສັດຂະໜາດນ້ອຍ, ປະເພດສັດ, ອາຫານສັດ ເພື່ອໃຫ້ເໝາະສົມກັບສະພາບຕົວຈິງຂອງທ້ອງຖິ່ນ.
10. ປະສານງານກັບອຳນາດການປົກຄອງທ້ອງຖິ່ນ ແລະ ຊຸມຊົນ ໃນການກຳນົດສະຖານທີ່ກໍ່ສ້າງສາງເກັບເມັດພັນພືດ ແລະ ເຂດລ້ຽງສັດ ໃຫ້ເໝາະສົມກັບພື້ນທີ່.

**<u>ຄຸນວຸດທິ ແລະ ປະສົບການຂອງຜູ້ສະໝັກ:</u>**

- ຮຽນຈົບປະລິນຍາຕີ ຫລື ທຽບເທົ່າ ດ້ານວິຊາປູກຝັງ ແລະ ລ້ຽງສັດ
- ມີປະສົບການເຮັດວຽກດ້ານການສົ່ງເສີມກະສິກຳ (ປູກຝັງ-ລ້ຽງສັດ) ຢ່າງໜ້ອຍ 3 ປີ
- ມີປະສົບການໃນການເຮັດວຽກ, ວາງແຜນ ແລະ ບໍລິຫານໃນຮູບແບບການຂັບເຄື່ອນດ້ວຍຊຸມຊົນຢ່າງໜ້ອຍ 2 ປີ
- ມີຄວາມຮູ້ ແລະ ປະສົບການໃນວຽກງານພັດທະນາຊຸມຊົນ, ໄດ້ຮັບການຝຶກອົບຮົມ ແລະ ເປັນຄູຝຶກມາ ກ່ອນ.

- ມີຄວາມຮູ້ທາງດ້ານເຕັກນິກການກໍ່ສ້າງໂຄງລ່າງດ້ານກະສິກຳຍິ່ງເປັນການດີ
- ມີຄວາມຮູ້ກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳ ເພື່ອປັບປຸງຊີວິດການເປັນຢູ່ໃຫ້ແກ່ຊຸມຊົນ
- ມີປະສົບການໃນການຈັດຕັ້ງການຈັດຕັ້ງການຝຶກອົບຮົມມາກ່ອນ ຍິ່ງເປັນການດີ
- ມີຄວາມຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານບົດບາດຍິງ-ຊາຍ ແລະ ຊົນເຜົ່າ
- ມີຄວາມຮູ້ ແລະ ສາມາດນຳໃຊ້ຄອມພິວເຕີ້ (MS. Office) ເຂົ້າໃນວຽກຂອງຕົນ
- ສາມາດນຳໃຊ້ໂປຣແກຣມໂອໂຕແຄັດ ໃນການແຕ້ມ ແລະ ອອກແບບ ຍິ່ງເປັນການດີ
- ສາມາດເຮັດວຽກເປັນທີມ, ມີມະນຸດສຳພັນດີ ແລະ ສື່ສານກັບປະຊາຊົນທ້ອງຖິ່ນໄດ້ດີ
- ສາມາດເດີນທາງໄປເຮັດວຽກຢູ່ເຂດທຸລະກັນດານ ຫລື ບ່ອນຫ່າງໄກສອກຫລີກໄດ້.

ທ່ານຜູ້ທີ່ສົນໃຈ ເຊີນຍື່ນໃບສະໝັກ, ຊີວະປະຫວັດ, ໃບປະກາດຕ່າງໆ, ໃບຄະແນນຈົບການສຶກສາ ແລະ ເອກະສານກ່ຽວຂ້ອງອື່ນໆ (ຖ້າມີ), ສຳເນົາບັດປະຕົວ ຫລືປຶ້ມສຳມະໂນ, ພ້ອມດ້ວຍຮູບຖ່າຍຂະໜາດ 3x4 (1 ໃບ) ໄປຍັງຫ້ອງການກອງທຶນຫຼຸດຜ່ອນຄວາມທຸກຍາກ ສູນກາງ (ນະຄອນຫລວງວຽງຈັນ): ສຳນັກງານນາຍົກລັດຖະມົນຕີ, ຄະນະຊີ້ນຳພັດທະນາຊົນນະບົດ (ຕຶກກົມຈັດຕັ້ງເກົ່າ), ໂທລະສັບ 021 261 479-80, ແຟັກ: 021 261 481. *E-mail: piengngeune@prflaos.org, www. prflaos.org* ຫລື ທ່ານສາມາດສົ່ງໄປຍັງຫ້ອງການ ທລຍ ທີ່ປະຈຳຢູ່ແຕ່ລະແຂວງ ດັ່ງກ່າວຂ້າງເທິງ.ແຂວງຫົວພັນ(064) 313 000, ຊຽງຂວາງ (061) 213 209, ຫລວງນ້ຳທາ (086) 212 083, ສະຫວັນນະເຂດ (041) 214 902, 660321, ເຊກອງ (038) 211656. ***ປິດຮັບສະໝັກວັນທີ 18 ພຶດສະພາ 2011.***

ກະລຸນາຮັບຊາບວ່າ ກອງທຶນຈະທຳການຕິດຕໍ່ຫາຜູ້ທີ່ເໝາະສົມ ແລະຖືກຕ້ອງຕາມເງື່ອນໄຂທີ່ຄົບຖ້ວນເທົ່ານັ້ນ ເພື່ອທຳການສຳພາດ. ເອກະສານສະໝັກທຸກຢ່າງຂອງທ່ານ ບໍ່ອະນຸຍາດໃຫ້ຖອນຄືນ.